ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----000-----

ກະຊວງ ຄົມມະນາຄົມ ຂົນສົ່ງ

ໄປສະນີ ແລະ ກໍ່ສ້າງ ເລກທີ່ 104 /ຄຂປກ

ວັນທີ່ 12/1/2000

# ຂໍ້ກຳນົດ
# ກ່ຽວກັບການຂົນສົ່ງທາງນໍ້າ

- ອີງໃສ່ ດຳລັດ ຂອງ ນາຍຍົກລັດຖະມົນຕີ ເລກທີ່ 66/ສນຍ, ລົງວັນທີ່ 20/05/99 ວ່າ ດ້ວຍການ ຈັດຕັ້ງ ແລະເຄື່ອນໄຫວ ຂອງ ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະກໍ່ສ້າງ.

## ລັດຖະມົນຕີ ວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ອອກຂໍ້ກຳນົດ:

## ໝວດທີ່ I
## ຂໍ້ກຳນົດ ທົ່ວໄປ.

**ມາດຕາ 1. ຈຸດປະສົງ.**

ຂໍ້ກຳນົດ ສະບັບນີ້ ວາງອອກ ເພື່ອ ການຄຸ້ມຄອງການຈັດຕັ້ງ ການເຄື່ອນໄຫວ ວຽກງານຂົນສົ່ງ ທາງນໍ້າ ພາຍໃນ ແລະ ລະຫວ່າງປະເທດ ໃຫ້ສອດຄອງກັບ ແນວທາງ ນະໂຍບາຍ ຂອງພັກ ແລະ ບຽບກົດໝາຍຂອງລັດ ໃຫ້ມີປະສິດທິພາບສູງໃນການບໍລິການ ແລະ ຮັບປະກັນຄວາມປອດໄພ.

**ມາດຕາ 2. ຄວາມໝາຍ ຂອງການຂົນສົ່ງທາງນໍ້າ**

ການຂົນສົ່ງທາງນໍ້າ ແມ່ນ ການຂົນສົ່ງສິນຄ້າ, ການຂົນສົ່ງຄົນ ຫຼື ຜູ້ໂດຍສານ ການຂົນສົ່ງວັດຖຸ ເຄື່ອງຂອງ ຫຼື ສັດ ດ້ວຍເຮືອປະເພດ ແລະຂະໜາດຕ່າງໆ ທີ່ແລ່ນ ຕາມລຳແມ່ນໍ້າ ຢູ່ພາຍໃນປະເທດ, ອ່າງນໍ້າ, ບຶງ, ຄອງ, ແຫຼ່ງນໍ້າອື່ນໆ ແລະ ແມ່ນໍ້າຊາຍແດນລະຫວ່າງປະເທດ.

**ມາດຕາ 3. ພັນທະໃນການຂົນສົ່ງທາງນໍ້າ**

ໃນ ການຂົນສົ່ງ ທາງນ້ຳ ຜູ້ຂົນສົ່ງໂດຍສານ ມີພັນທະຮັກສາ ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ຂອງສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ. ນອກຈາກນັ້ນ ຜູ້ຂົນສົ່ງຍັງຕ້ອງປະຕິບັດ ພັນທະອື່ນໆ ຕາມລະບຽບ ກົດໝາຍ.

ເຮືອສ່ວນຕົວ ກໍ່ມີໜ້າທີ່ ປະກອບສ່ວນ ໃນການປະຕິບັດພັນທະ ດັ່ງກ່າວນີ້ເຊັ່ນກັນ.

**ມາດຕາ 4. ຂອບເຂດ ການນຳໃຊ້ຂໍ້ກຳນົດ.**

ຂໍ້ກຳນົດ ສະບັບນີ້ນຳໃຊ້ ສຳລັບ ການເຮັດທຸລະກິດ ຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ລວມທັງການຂົນສົ່ງ ສະເພາະ ແລະ ການຂົນສົ່ງສ່ວນຕົວ ດ້ວຍເຮືອທີ່ແລ່ນ ຫຼື ລາກແກ່ ດ້ວຍເຄື່ອງ ຈັກທຸກປະເພດ ແລະ ທຸກຂະໜາດ ພາຍໃນ ສປປ ລາວ ແລະ ລະຫວ່າງ ປະເທດ ແຕ່ໃຫ້ຍົກເວັ້ນການ ຂົນສົ່ງແບບປະຖົມປະຖານ ເຊັ່ນ: ດ້ວຍເຮືອທໍ່, ເຮືອພາຍ, ແພ ເປັນຕົ້ນ.

## ໝວດທີ່ II

## ລະບຽບການລວມ ຂອງ ການຄຸ້ມຄອງການຂົນສົ່ງທາງນ້ຳ

**ມາດຕາ 5. ປະເພດ ການຂົນສົ່ງທາງນ້ຳ.**

ການຂົນສົ່ງທາງນ້ຳຢູ່ໃນ ສ.ປ.ປ.ລາວ ມີປະເພດ ດັ່ງນີ້:

1- ວິສາຫະກິດ ການຂົນສົ່ງ ທາງນ້ຳ ແມ່ນການບໍລິການ ຮັບຈ້າງ ຂົນສົ່ງ ທາງນ້ຳ ຢູ່ພາຍໃນ ແລະ ຕ່າງປະເທດ.

2- ການຂົນສົ່ງສະເພາະ ແມ່ນການຂົນສົ່ງສິນຄ້າ, ວັດຖຸເຄື່ອງຂອງ, ສັດ ຫຼື ຄົນ ເພື່ອຮັບໃຊ້ຢູ່ໃນຂອບເຂດ ວິສາຫະກິດ ຫຼື ສະເພາະ ການ ຈັດຕັ້ງຂອງຕົນເອງ.

3- ການຂົນສົ່ງ ສ່ວນຕົວທີ່ບໍ່ແມ່ນ ການຂົນສົ່ງສະເພາະ ແລະ ຮັບຈ້າງການຂົນສົ່ງທົ່ວໄປ ແມ່ນການຂົນສົ່ງວັດຖຸ, ເຄື່ອງຂອງ, ສັດ ຫຼື ຄົນ ເພື່ອຮັບໃຊ້ວຽກງານ ສ່ວນຕົວ.

**ມາດຕາ 6. ຂອບເຂດການຂົນສົ່ງທາງນ້ຳ.**

ຂອບເຂດ ການຂົນສົ່ງທາງນ້ຳ ແມ່ນການກຳນົດ ຂອບເຂດ ການແລ່ນເຮືອຂົນສົ່ງສິນຄ້າ ແລະ ໂດຍສານ ຊຶ່ງ ແບ່ງອອກເປັນ ສອງ ຂອບເຂດ ດັ່ງນີ້:

- ພາຍໃນປະເທດ.
- ລະຫວ່າງປະເທດ

1- ການຂົນສົ່ງ ທາງນໍ້າ ພາຍໃນປະເທດ ແມ່ນ ການຂົນສົ່ງ ຕາມລໍາແມ່ນໍ້ພາຍໃນແຂວງ ລະຫວ່າງແຂວງ.

ເຮືອຂົນສົ່ງ ທຸກລໍາ ຕ້ອງເຂົ້າຈອດ ແລະ ອອກ ຕາມທ່າເຮືອ ຫຼື ຈອດທ່າ ສົ່ງສິນຄ້າ ຫຼື ຜູ້ໂດຍສານ ຕາມທີ່ ຂະແໜງຄົມມະນາຄົມ ຂົງສົ່ງ ໄປສະນີ ແລະ ກໍ່ສ້າງໄດ້ກໍານົດ.

## ໝວດທີ່ III

## ການຂໍອະນຸຍາດ ດໍາເນີນ ການຂົນສົ່ງ ທາງນໍ້າ.

### ມາດຕາ 11. ການຂໍອະນຸຍາດ ດໍາເນີນ ການຂົນສົ່ງທາງນໍ້າ.

ການຂໍອະນຸຍາດ ດໍາເນີນ ການຂົນສົ່ງທາງນໍ້າ ພາຍໃນ ປະເທດ ແລະ ລະຫວ່າງ ປະເທດໃຫ້ ປະຕິບັດຕາມ ມາດຕາ 16, 17, 18 ແລະ 19 ຂອງ ກົດໝາຍທຸລະກິດ ແລະ ກົດໝາຍວ່າດ້ວຍ ການສົ່ງເສີມ ການລົງທຶນ ພາຍໃນ. ສ່ວນການລົງທຶນ ຂອງ ຕ່າງປະເທດ ນັ້ນ ໃຫ້ ປະຕິບັດ ຕາມມາດຕາ 23, 24, 25,ແລະ 26 ຂອງກົດໝາຍ ວ່າດ້ວຍ ການ ສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ ຂອງຕ່າງປະເທດ ຢູ່ ສປປ ລາວ ແລະ ຕາມ ລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 12. ເງື່ອນໄຂ ຂອງຜູ້ທີ່ຈະໄດ້ອະນຸຍາດ ໃຫ້ເຮັດວິສາຫະກິດ ການຂົນສົ່ງທາງນໍ້າ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ສ້າງຕັ້ງ, ຂຶ້ນທະບຽນວິສາຫະກິດ ການຂົນສົ່ງ ທາງນໍ້າ ຕ້ອງມີເງື່ອນໄຂດັ່ງນີ້:

- ມີຄວາມສາມາດ ທາງດ້ານ ວິຊາອາຊີບ ການຂົນສົ່ງທາງນໍ້າ.
- ມີຄວາມສາມາດ ທາງດ້ານ ທຶນຮອນ.
- ມີຄວາມຊື່ສັດ ຕໍ່ວິຊາອາຊີບ ການຂົນສົ່ງ ທາງນໍ້າ.

ນອກຈາກນີ້ຜູ້ຮ້ອງຂໍ ຍັງຕ້ອງໄດ້ ປະຕິບັດ ຕາມເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນກົດໝາຍທຸລະ ກິດ ແລະ ລະບຽບການ ກ່ຽວກັບ ການຂົນສົ່ງທາງນໍ້າອີກ.

### ມາດຕາ 13. ການນໍາໃຊ້ໃບທະບຽນວິສາຫະກິດ ຂົນສົ່ງທາງນໍ້າ.

ໃບທະບຽນວິສາຫະກິດ ຂົນສົ່ງ ທາງນໍ້າບໍ່ສາມາດ ໃຫ້ຜູ້ອື່ນນໍາໃຊ້, ໃຫ້ຜູ້ອື່ນເຊົ່າ ຫຼື ບໍ່ ສາມາດໂອນ ໃຫ້ຜູ້ອື່ນໄດ້.

### ມາດຕາ 14. ເງື່ອນໄຂ ຂອງເຮືອ ທີ່ຈະນໍາເຂົ້າໃນ ວິສາຫະກິດ ການຂົນສົ່ງ, ການຂົນສົ່ງສະເພາະ ແລະການຂົນສົ່ງສ່ວນຕົວ.

ເຮືອທີ່ຈະນໍາເຂົ້າໃນ ການດໍາເນີນ ວິສາຫະກິດ ການຂົນສົ່ງ, ການຂົນສົ່ງສະເພາະ ແລະການ ຂົນສົ່ງສ່ວນຕົວ ຕ້ອງປະກອບດ້ວຍ ເງື່ອນໄຂຕົ້ນຕໍດັ່ງນີ້:

- ໄດ້ຈົດທະບຽນ ເປັນເຮືອຂົນສົ່ງ.
- ໄດ້ຂຶ້ນທະບຽນປ້າຍເຮືອ.
- ມີມາດຕະຖານຖືກຕ້ອງຕາມ ເຕັກນິກ ການຂົນສົ່ງ.
- ມີປະກັນໄພ.
- ໄດ້ເສຍຄ່າທຳນຽມ ຫຼື ພັນທະຕ່າງໆ ຕາມລະບຽບການ.

ນອກຈາກນີ້ ຍັງຕ້ອງໄດ້ປະຕິບັດ ຕາມເງື່ອນໄຂຕ່າງໆ ຕາມທີ່ໄດ້ກຳນົດໄວ້ ໃນວັກທີ 1 ແລະ 4 ຂອງມາດຕາ 61 ຂອງກົດໝາຍພາສີ.

**ມາດຕາ 15. ການປະກັນໄພ.**

ເຮືອທີ່ນຳໃຊ້ເຂົ້າໃນ ການດຳເນີນ ວິສາຫະກິດ ການຂົນສົ່ງ, ການຂົນສົ່ງສະເພາະ ລວມທັງເຮືອຂົນສົ່ງສ່ວນຕົວ ຕ້ອງມີປະກັນໄພ ໂດຍສະເພາະ ແມ່ນ ການປະກັນໄພ ບຸກຄົນທີ່ສາມ, ສຳລັບເຮືອຂົນສົ່ງລະຫວ່າງປະເທດ ນັ້ນ ນອກຈາກ ປະກັນໄພ ບຸກຄົນທີ່ສາມແລ້ວ ຍັງຕ້ອງມີປະກັນໄພ ຜູ້ຂັບເຮືອ ແລະ ຜູ້ຊ່ວຍວຽກປະຈຳເຮືອທຸກຄົນ.

**ມາດຕາ 16. ໃບອານຸຍາດແລ່ນເຮືອຂົນສົ່ງ.**

ໃບອະນຸຍາດ ແລ່ນເຮືອຂົນສົ່ງ ແມ່ນ ອະນຸຍາດ ທີ່ຈະອອກໃຫ້ແກ່ເຮືອ ທີ່ ເຮັດ ວິສາຫະກິດການ ຂົນສົ່ງທີ່ຖືກຕ້ອງ ຕາມ ປະເພດ, ມາດຕະຖານເຕັກນິກ ແລະ ຂອບເຂດການຂົນສົ່ງ ຊຶ່ງຂະແໜງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ອະນຸມັດ.

ເຮືອທີ່ນຳໃຊ້ເຂົ້າໃນ ການຂົນສົ່ງສະເພາະ ແລະ ການຂົນສົ່ງສ່ວນຕົວ ເພື່ອຮັບໃຊ້ວິສາຫະກິດ ຫຼື ກິດຈະການ ຂອງຕົນເອງ ກໍ່ຕ້ອງມີໃບອະນຸຍາດ ແລ່ນເຮືອເຊັ່ນດຽວກັນ.

**ມາດຕາ 17. ການຂົນສົ່ງ ວັດຖຸອັນຕະລາຍ.**

ການຂົນສົ່ງ ວັດຖຸອັນຕະລາຍ: ວັດຖຸເຄມີ, ວັດຖຸໄວໄຟ, ວັດຖຸລະເບີດ ນັ້ນຈະແມ່ນ ວິສາຫະກິດການຂົນສົ່ງ, ການຂົນສົ່ງສະເພາະ ຫຼື ການຂົນສົ່ງສ່ວນຕົວ ກໍ່ຕາມ ຕ້ອງໄດ້ຮັບ ອານຸຍາດຈາກກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ບົນພື້ນຖານ ການປະສານງານສົມທົບ ກັບພາກສ່ວນກ່ຽວຂ້ອງ ແລະ ຕ້ອງປະຕິບັດ ຕາມລະບຽບ ການຂົນສົ່ງ ວັດຖຸອັນຕະລາຍ ຢ່າງເຂັ້ມງວດ.

**ມາດຕາ 18. ຄວາມຮັບຜິດຊອບຂອງຜູ້ຂົນສົ່ງທາງນ້ຳ**

ໃນການຂົນສົ່ງສິນຄ້າ ທາງນ້ຳ, ຜູ້ຂົນສົ່ງມີຄວາມຮັບຜິດຊອບ ໃຊ້ແທນຄ່າເສຍຫາຍ ຖ້າວ່າສິນຄ້າ ຫາກບໍ່ເຖິງຈຸດໝາຍ, ເຖິງຈຸດໝາຍບໍ່ທັນຕາມກຳນົດເວລາ ຊຶ່ງເຮັດໃຫ້ເຈົ້າຂອງສິນຄ້າ ໄດ້ຮັບຄວາມເສັຍຫາຍ, ສິນຄ້າເສັຍຄຸນນະພາບ ຫຼື ຕົກເຮ່ຍເສັຍຫາຍ ຍ້ອນຄວາມຜິດພາດ ຂອງຜູ້ຂົນສົ່ງ.

ໃນການຂົນສົ່ງໂດຍສານ ທາງນ້ຳ, ຜູ້ຂົນສົ່ງ ຕ້ອງມີ ຄວາມຮັບຜິດຊອບ ໃຊ້ແທນຄ່າເສັຍຫາຍ ຖ້າວ່າການຂົນສົ່ງ ຜູ້ໂດຍສານ ຫາກບໍ່ເຖິງຈຸດໝາຍ, ຜູ້ໂດຍສານບໍ່ໄດ້ຮັບຄວາມປອດໄພ ຫຼື ເຄື່ອງຂອງ ຜູ້ໂດຍສານ ຫາກຕົກເຮັ່ຍເສັຍຫາຍ ຍ້ອນຄວາມຜິດຂອງຜູ້ຂົນສົ່ງ.

ນອກຈາກນີ້ຜູ້ ຂົນສົ່ງ ອາດຈະໄດ້ຮັບຄວາມຮັບຊອບ ທາງອາດຍາ ໃນກໍລະນີ ທີ່ມີການກະທຳຜິດ ທາງອາດຍາ.

## ໝວດທີ່ IV

## ການຂົນສົ່ງ ລະຫວ່າງ ປະເທດ.

### ມາດຕາ 19. ການ ຂົນສົ່ງ ທາງນ້ຳ ລະຫວ່າງ ປະເທດ.

ການຂົນສົ່ງທາງນ້ຳ ລະຫວ່າງປະເທດ ຕ້ອງປະຕິບັດ ຕາມ ສັນຍາທີ່ລັດຖະບານ ສປປ ລາວ ໄດ້ເຊັ່ນ ກັບຕ່າງປະເທດ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ່ລັດຖະບານ ໄດ້ເຂົ້າຮ່ວມ.

### ມາດຕາ 20. ເຮືອ ຂົນສົ່ງ ຂອງຕ່າງປະເທດ.

ເຮືອ ຂົນສົ່ງ ຂອງ ຕ່າງປະເທດ ທີ່ດຳເນີນ ການຂົນສົ່ງ ລະຫວ່າງ ຕ່າງປະເທດ ກັບ ສປປ ລາວ ຕ້ອງເຂົ້າຈອດ ແລະ ອອກຕາມທ່າເຮືອ ທີ່ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ກຳນົດ ແລະ ຕ້ອງປະຕິບັດ ຕາມ ລະບຽບ ການຈາລະຈອນ ທາງນ້ຳ ແລະ ລະບຽບ ກົດໝາຍ ສປປ ລາວ.

## ໝວດທີ່ V

## ນະໂນບາຍ ຕໍ່ ຜູ້ມີຜົນງານ ແລະ ມາດຕະການ ຕໍ່ ຜູ້ລະເມີດ

### ມາດຕາ 21. ນະໂນບາຍ ຕໍ່ ຜູ້ມີຜົນງານ.

ບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ດຳເນີນ ການຂົນສົ່ງທາງນ້ຳ ຢ່າງມີຄຸນນະພາບ, ຮັບປະກັນຄວາມປອດໄພ, ມີຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາສິ່ງແວດລ້ອມໄດ້ດີ ປະຕິບັດ ອັດຕາ ຄ່າຂົນສົ່ງສິນຄ້າ ແລະ ໂດຍສານ ຕາມ ລະບຽບການ ຢ່າງເຂັ້ມງວດ ຈະໄດ້ຮັບອະນຸຍາດ ໃຫ້ສືບຕໍ່ ດຳເນີນ ກິດຈະການ, ຈະໄດ້ຮັບຜົນປະໂຫຍດ ແລະ ນະໂຍບາຍອື່ນໆ ຢ່າງເໝາະສົມ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນ ກົດໝາຍ ວ່າດ້ວຍ ການສົ່ງເສີມການ ລົງທຶນ ພາຍໃນ ແລະກົດໝາຍ ວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງ ການລົງທຶນ ຂອງຕ່າງປະເທດ ຢູ່ ສປປ ລາວ.

### ມາດຕາ 22. ມາດຕະການ ຕໍ່ ຜູ້ລະເມີດ.

ບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ລະເມີດ ຂໍ້ກຳນົດ ກ່ຽວກັບ ການຂົນສົ່ງ ທາງນ້ຳ ສະບັບນີ້ຈະ ຖືກສຶກສາອົບຮົມ, ຖືກປັບໃໝ ຫຼື ຖືກລົງໂທດໃນສະຖານໜັກ ຫຼື ເບົາຕາມ ລະບຽບ ກົດໝາຍ.

ນອກຈາກນີ້ ຜູ້ລະເມີດ ອາດຈະຖືກ ປະຕິບັດໂທດ ເພີ່ມອີກ ດັ່ງນີ້:

- ຖືກງົດ ການດຳເນີນ ກິດຈະການ.
- ຖືກຖອນ ໃບອະນຸຍາດ.
- ຖືກຮິບ ພາຫະນະ ທີ່ນຳໃຊ້ເຂົ້າໃນ ການກະທຳຜິດ.

## ໝວດທີ VI
## ຂໍ້ກຳນົດ ສຸດທ້າຍ.

**ມາດຕາ 23. ການຈັດຕັ້ງ ປະຕິບັດ.**

ມອບໃຫ້ກົມຂົນສົ່ງ ສົມທົບກັບ ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ກຳນົດ ສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 24. ຜົນສັກສິດ.**

ຂໍ້ກຳນົດ ສະບັບນີ້ ມີຜົນສັກສິດ ນັບແຕ່ລົງລາຍເຊັນ ເປັນຕົ້ນໄປ, ບັດດາຂໍ້ກຳນົດ ກົດລະບຽບ ທີ່ບໍ່ສອດຄ່ອງ ກັບຂໍ້ກຳນົດ ສະບັບນີ້ ແມ່ນລ້ອນຖືກລົບລ້າງ.

ລັດຖະມົນຕີ ວ່າການກະຊວງ ຄົມມະນາຄົມ
ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ.

ເພົ້າ ບຸນນະຜົນ